# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 25 ພຶສພາ 2008 (5-25-2008)

---

## ຕຽມພ້ອມໃຫ້ອະໄພ

**ຂໍ້ພຣະຄັມພີໃນບົດຮຽນ:** ເອເຟໂຊ 4:22-32; ຟີເລໂມນ 8-10, 15-18

**ພຣະຄັມພີແຫ່ງຄວາມຈິງ:** ໂດຍການກ່ຽວພັນກັບຜູ້ອື່ນໃນທາງທີ່ຄ້າຍຄືພຣະຄຣິດ, ລວມທັງການຊອກຫາຄວາມປອງດອງກັນກັບພວກທີ່ພວກເຮົາໄດ້ເຮັດຜິດຕໍ່ພວກເຂົາ, ພວກເຮົາສ້າງຄວາມສັມພັນທີ່ພຣະເຈົ້າມີພຣະປະສົງເອົາໄວ້ນັ້ນ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ວຍທ່ານໃນການສ້າງຄວາມສັມພັນທີ່ຫມັ້ນຄົງຢ່າງແທ້ຈິງໂດຍ:

- ການສໍາຣວດເບິ່ງສະພາບການຂອງຮອຍແຕກແຫງໃນຄວາມສັມພັນທີ່ທ່ານມີໃນຊີວິດ; ແລະ
- ການເລີ້ມຕົ້ນຫລືການປ່ຽນແປງຄວາມພະຍາຍາມຂອງທ່ານໃຫມ່ໃນການປົວແປງຄວາມສັມພັນທີ່ມີຮອຍແຕກແຫງ.

## ເປັນຫຍັງຂ້າພະເຈົ້າຈຶ່ງຄວນສົນໃຈກ່ຽວກັບການໃຫ້ອະໄພ?

"ຂ້າພະເຈົ້າແລະບຽວບໍ່ໄດ້ເວົ້າກັນມາໄດ້ຫລາຍປີແລ້ວ." ຄໍາລາຍງານອັນໂສກເສົ້ານີ້ມາຈາກແຊເຣິນ, ໃນການບັນລະຍາຍເຖິງຄວາມສັມພັນຂອງລາວທີ່ມີຕໍ່ອ້າຍຂອງນາງ. ພວກເຂົາບໍ່ມີການສົນທະນາກັນບໍ່ແມ່ນຍ້ອນຢູ່ໄກກັນດອກ. ອ້າຍຂອງລາວກໍຢູ່ຟາກທາງກົງກັນຂ້າມກັນນັ້ນເອງ. ຄວາມສັມພັນຂອງພວກເຂົາຂາດລົງມາໄດ້ຫລາຍປີແລ້ວຍ້ອນຄອບຄົວບໍ່ເຫັນດີເຫັນພ້ອມນໍາກັນ. ພວກເຂົາສືບຕໍ່ມີດງຽບແລະແຍກຈາກກັນເພາະວ່າທັງສອງຝ່າຍບໍ່ເຫັນເຖິງຄວາມສໍາຄັນຂອງການຍົກໂທດໃຫ້ກັນແລະກັນ.

ທ່ານເຫັນຄວາມສໍາຄັນຂອງການຍົກໂທດໃຫ້ກັນແລະກັນບໍ່? ມີອ້າຍເອື້ອຍນ້ອງຄຣິສຕຽນຫລາຍສໍ່າໃດທີ່ທ່ານຢູ່ໃກ້ຊິດພໍທີ່ຈະພົວພັນກັບພວກເຂົາ, ແຕ່ວ່າຖືກແຕກແຍກຈາກທ່ານເນື່ອງດ້ວຍການບໍ່ຍອມຮັບເອົາການໃຫ້ອະໄພໂທດໃນອະດີດ? ແມ່ນຫຍັງໃນບົດຮຽນມື້ນີ້ທີ່ທ່ານຈະອະນຸຍາດໃຫ້ສອນທ່ານກ່ຽວກັບສິ່ງທີ່ທ່ານຈະໄດ້ເພີ້ມຂຶ້ນຢ່າງ ຫລວງຫລາຍຈາກການອະໄພໂທດໃຫ້ແກ່ຄົນອື່ນ?

## ສຶກສາພຣະຄັມພີ

### 1. ຈໍາໄວ້ວ່າທ່ານເປັນຄົນໃຫມ່ແລ້ວ (ເອເຟໂຊ 4:22-24)

ການອະໄພໂທດແມ່ນຍາກທີ່ຈະເຮັດໄດ້. ທ່ານອາດຈະຮູ້ສຶກວ່າຄວນຈະເປັນຄົນທີ່ບໍ່ເຫມືອນເດີມທີ່ຈະຊອກຫາທາງຄືນດີກັບພວກທີ່ທ່ານໄດ້ເຮັດໃຫ້ພວກເຂົາເຈັບປວດ. ຂ່າວດີນັ້ນກໍຄືຖ້າຫາກທ່ານເປັນຂອງພຣະເຢຊູແລ້ວ, ພຣະອົງໄດ້ເຮັດໃຫ້ທ່ານເປັນຄົນໃຫມ່ແລ້ວຄືຜູ້ທີ່ມີການຖືກບັນຈຸໃຫ້ເຕັມໄປດ້ວຍການໃຫ້ອະໄພ.

ຜູ້ຮັບໃຊ້ພຣະເຈົ້າທ່ານນຶ່ງທີ່ເຮັດວຽກໃນຄຸກກັກຂັງ ໄດ້ເຊີນໃຫ້ຂ້າພະເຈົ້າໄປເປັນຜູ້ນໍາພິທີນະມັສການກັບພວກນັກໂທດ. ເມື່ອພວກນະມັສການເຂົ້າມາເຕັມສະຖານທີ່, ຂ້າພະເຈົ້າກໍຕະລຶງຕໍ່ເຫດການທີ່ທຸກໆຄົນໃສ່ເຄື່ອງນຸ່ງຄືກັນຫມົດທຸກຄົນ. ແຕ່ລະຄົນໃສ່ຊຸດສີນໍ້າຫມາກກ້ຽງ. ຊຸດແບບນັ້ນບໍ່ມີການປ່ຽນແປງຈົນກ່ວາຜູ້ນັ້ນຈະຫມົດໂທດເສັຍກ່ອນ. ເມື່ອຜູ້ນັ້ນຫາກຖືກປະກາດໃຫ້ເປັນເສຣີຊົນແລ້ວ, ລາວກໍຈະໄດ້ຮັບເຄື່ອງນຸ່ງແບບໃຫມ່. ຂນະທີ່ອະດີດນັກໂທດ

ກຳລັງຕຽມພ້ອມທີ່ຈະອອກຈາກທີ່ຄຸມຂັງແລະເລີ້ມຕົ້ນຊີວິດໃຫມ່ໃນເສຣີພາບນັ້ນ, ລາວໄດ້ປົດຊຸດຂອງນັກໂທດອອກແລະສວມຊຸດໃຫມ່ເຂົ້າ, ເປັນຊຸດທີ່ພວກເສຣີຊົນນຸ່ງຢູ່ຂ້າງນອກຄຸກກັກຂັງ.

ໂປໂລໄດ້ໃຊ້ພາບພົດຂອງການຖອດຖີ້ມເຄື່ອງນຸ່ງຊຸດເກົ່າແລະສວມຊຸດໃຫມ່ທີ່ບັນລະຍາຍເຖິງການປ່ຽນແປງຊີວິດເນື່ອງດ້ວຍຜົນຂອງຄວາມລອດພົ້ນບາບ. ຂນະທີ່ພວກເຮົາເປັນຜູ້ຖືກກັກຂັງຢູ່ໃນຄວາມຜິດບາບຢູ່ນັ້ນ, **ຄືຄົນຜູ້ເກົ່າ** "ສວມ" ນິສັຍແລະການປະພຶດຂອງຊີວິດທີ່ເປັນບາບ. **ທາງຂອງຊີວິດເກົ່ານັ້ນ**, ໂປໂລເວົ້າວ່າ, **ມັນເສື່ອມສູນໄປຕາມກິເລດຕັນຫາທີ່ຫລອກລວງ**ນັ້ນ. ແຕ່ວ່າເມື່ອພຣະເຢຊູປົດປ່ອຍພວກເຮົາໃຫ້ມີເສຣີພາບຈາກຄວາມຜິດບາບແລ້ວ, ພຣະອົງກໍປະທານສະພາບມະນຸດໃຫມ່ໃຫ້, ເປັນຄຣິສຕຽນ, **ສວມ**ທາງແຫ່ງຊີວິດໃຫມ່, ເປັນຊີວິດຂອງ**ຄວາມຊອບທັມ**ແລະ**ຄວາມຈິງ**.

ໂປໂລໄດ້ເວົ້າວ່າມະນຸດ**ຄົນໃຫມ່**, ຊີວິດຄຣິສຕຽນໃຫມ່ຖືກປະທານໃຫ້ເພື່ອສວມສະພາບໃຫມ່**ທີ່ໄດ້ສ້າງຂຶ້ນຕາມຄວາມຄ້າຍຄືພຣະເຈົ້າ**. ເມື່ອວິຖີຊີວິດຄຣິສຕຽນຂອງທ່ານຫາກມີຄວາມຄ້າຍຄືແຜນການແລະທາງຂອງພຣະເຈົ້າຫລາຍສ່ຳໃດ, ຄົນອື່ນກໍຈະຮູ້ຈັກວ່າທ່ານເປັນຂອງພຣະອົງ.

ການຕ້ອນຮັບເອົາພຣະຄຣິດແມ່ນການຕັດສິນໃຈຄັ້ງດຽວ, ແຕ່ວ່າການຈະຖີ້ມວິຖີຊີວິດຂອງຝ່າຍໂລກແລະສວມທາງຂອງພຣະເຈົ້າແມ່ນເປັນແຕ່ລະມື້ແຕ່ລະວັນ, ຫລືການເລືອກໃນແຕ່ລະວິນາທີ. ທຸກໆເທື່ອທີ່ພວກເຮົາພົບກັບການທ້າທາຍຂອງຊີວິດ, ລວມທັງການທ້າທາຍຂອງການໃຫ້ອະພັຍ, ພວກເຮົາຕ້ອງເລືອກເອົາຊີວິດຕາມແບບພຣະເຢຊູແລະເປັນຜູ້ຕິດຕາມພຣະອົງ.

## ຂ. <u>ກ່ຽວພັນກັບຄົນອື່ນໆຢ່າງບໍ່ເຫັນແກ່ໂຕ</u> (ເອເຟໂຊ 4:25-31)

"ຖີ້ມອັນເກົ່າອອກໄປ" (ອຟຊ. 4:17-24), "ສວມສິ່ງໃຫມ່" (ອຟຊ. 4:25-31) -ໂປໂລປຽບທຽບຊີວິດເກົ່າຂອງຊາວເອເຟໂຊກັບຊີວິດໃຫມ່ໃນພຣະຄຣິດ. ໃນການນີ້, ລາວໄດ້ສອນພວກເຮົາຫລາຍໆທາງດ້ວຍກັນທີ່ພວກເຮົາສາມາດຫລີກລ້ຽງຄວາມເຈັບປວດກ່ອນທີ່ພວກເຂົາຕ້ອງການຄວາມອະພັຍໂທດ.

**ເວົ້າຄວາມຈິງ**. ໃນສານຕັດສິນ, ພຍານຕ້ອງສາບານວ່າຈະກ່າວແຕ່ຄວາມຈິງເພາະວ່າບໍ່ມີບັນຫາອັນໃດທີ່ສາມາດແກ້ໄຂຢ່າງຖືກຕ້ອງໄດ້ນອກຈາກວ່າພວກທີ່ມີສ່ວນເປັນຄົນສັດຊື່ຕໍ່ຊຶ່ງກັນແລະກັນ. ເພາະວ່າຄຣິສຕຽນເປັນ**ພາກສ່ວນຂອງຊຶ່ງກັນແລະກັນ**, ການເວົ້າຄວາມຈິງແມ່ນເພີ້ມກຳລັງໃຫ້ພຣະກາຍຂອງພຣະຄຣິດ. ເຊັ່ນດຽວກັນ, ການຕົວະເຮັດໃຫ້ຄວາມຈິງຈືດຈາງແລະຄຣິສຕຽນຮ່ວມກັນເຮັດໃຫ້ພາຣະກິດທີ່ພຣະເຢຊູປະທານໃຫ້ພວກເຮົານັ້ນໃຫ້ສຳເຣັດ.

ຈະຮ້າຍກໍຮ້າຍໄດ້ແຕ່ຢ່າໃຫ້ຄວາມຮ້າຍເປັນເຫດໃຫ້ເກີດການຜິດບາບ. ການມີຄວາມຮູ້ສຶກໂມໂຫນັ້ນບໍ່ໄດ້ເປັນບາບ; ການອະນຸຍາດໃຫ້ຄວາມໂມໂຫເຮັດໃຫ້ຄົນອື່ນເຈັບນັ້ນເປັນຄວາມຜິດບາບ. ໂປໂລບອກໃຫ້ພວກເຮົາເຖິງສອງທາງທີ່ພວກເຮົາສາມາດຫລີກເວັ້ນການເຮັດຜິດບາບເມື່ອພວກເຮົາມີຄວາມຮູ້ສຶກໂມໂຫ. ນຶ່ງ, ພວກເຮົາຕ້ອງເບິ່ງໃຫ້ເຫັນແລະຈັດການກັບຄວາມໂມໂຫຢ່າງຮີບດ່ວນ. ຖ້າພວກເຮົາຊັກຊ້າຢູ່, ຄວາມໂມໂຫສາມາດເປັນຫນອງທີ່ເກີນທີ່ພວກເຮົາຈະລະງັບມັນໄດ້ແລະນຳພາພວກເຮົາເຂົ້າສູ່ການຕໍ່ສູ້ຫລາຍກວ່າການກໍ່ສ້າງຄວາມສັມພັນ. ສອງ, ພວກເຮົາຕ້ອງ

ການຢາກຮູ້ວ່າແມ່ນໃຜຈະເປັນຜູ້ປຸ້ນເອົາຄວາມໂມໂຫ. ຜີມານຊາຕານຕ້ອງການຄວາມໂມໂຫຂອງພວກເຮົາເພື່ອຈະແຍກພວກເຮົາອອກຈາກຄວາມຈິງ. ຊາຕານຕ້ອງການຢາກໃຫ້ພວກເຮົາກ່າວປຽບທຍາມຄູ່ສັດຕຣູຂອງພວກເຮົາ, ທຳລາຍຄຳພຍານຂອງພວກເຮົາ, ແລະໃຫ້ເຮົາປະພຶດຕົວບໍ່ດີໂດຍການກ່າວແບ່ງແຍກ, ທຳລາຍສິ່ງຂອງຕ່າງຂນະທີ່ພວກເຮົາໃຈຮ້າຍຢູ່ນັ້ນ.

ເປັນຜູ້ທີ່ເອົາໃຫ້, ບໍ່ແມ່ນເປັນຜູ້ຮັບ. ໂປໂລມີຄຳສັ່ງໃຫ້ຄຣິສຕຽນ**ບໍ່ໃຫ້ລັກອີກຕໍ່ໄປ**. ລາວທ້າທາຍພວກເຮົາໃຫ້ໄດ້ເຫັນວ່າພວກເຮົາບໍ່ໄດ້ເອົາສິ່ງຂອງໆຄົນອື່ນຈຶ່ງຈະຖືວ່າເປັນຂະໂມຍ. ເມື່ອພວກເຮົາຫາກບໍ່ມີ**ຄວາມສັດຊື່ໃນການເຮັດວຽກການ**ດ້ວຍມືຂອງພວກເຮົາ, ພວກເຮົາຈະບໍ່ມີ**ບາງຢ່າງທີ່ຈະແບ່ງປັນກັບ**ພວກທີ່ມີ**ຄວາມຕ້ອງການ**. ພວກເຮົາໄດ້ລັກຂອງພວກເຂົາຫລືແລະໄດ້ຈີ້ປຸ້ນໂອກາດຂອງພວກເຮົາທີ່ຈະຖວາຍກຽດແດ່ພຣະເຈົ້າບໍ່?

ຢ່າໃຫ້ຄຳຫຍາບຊ້າອອກຈາກປາກຂອງທ່ານ. ຄຣິສຕຽນຕ້ອງເວົ້າດ້ວຍນ້ຳສຽງແຫ່ງພຣະຄຸນ, ໃຫ້ພວກທີ່ໄດ້ຍິນມີຄວາມຈະເຣີນຂຶ້ນ. ຄຳເວົ້າທີ່ນອກເຫນືອຈາກມາດຕະຖານນີ້ແມ່ນຄຳເວົ້າທີ່ບູດເນົ່າທີ່ຈະເຮັດໃຫ້ຄົນອື່ນເຈັບປວດແລະຈະຕ້ອງການໆໃຫ້ອະພັຍ.

ດຳຣົງຊີວິດທີ່ພໍພຣະທັຍພຣະເຈົ້າ. ແມ່ຂອງຂ້າພະເຈົ້າໄດ້ເລົ່າໃຫ້ຟັງເມື່ອຕອນທີ່ຍັງເປັນເດັກນ້ອຍນັ້ນ, ລາວບໍ່ຟັງຄວາມພໍ່ຂອງລາວ, ແທນທີ່ຈະຖືກໄມ້ແສ້, ພໍ່ຂອງລາວເອົາມານັ່ງເວົ້າກັນ, ຊຶ່ງເປັນການຊ່ອຍໃຫ້ລາວໄດ້ເຫັນເຖິງຄວາມເຈັບປວດທີ່ເກີດຈາກການບໍ່ຟັງຄວາມຂອງລາວນັ້ນ. ທ່ານຈະດຳຣົງຊີວິດທີ່ພໍພຣະທັຍພຣະເຈົ້າຖ້າຫາກທ່ານໄດ້ເຫັນວ່າຄວາມຜິດບາບຂອງທ່ານເຮັດໃຫ້**ພຣະວິນຍານບໍຣິສຸດເສັຍພຣະທັຍ**, ຊຶ່ງເປັນການເຮັດໃຫ້ຫົວໃຈແຕກສລາຍຂອງຜູ້ທີ່ເດີນຜ່ານຄວາມເຊື່ອຂອງທ່ານໃນພຣະເຢຊູ, ຜູ້ທີ່ປະທັບຕາຫມາຍທ່ານໄວ້ສຳລັບວັນແຫ່ງຄວາມລອດພົ້ນ.

ຢ່າຢຸດເຊົາໃນການຊຳຣະຊີວິດຂອງທ່ານ. ແມ່ຕູ້ຂອງຂ້າພະເຈົ້າຮັກສາສວນດອກໄມ້ໃຫ້ງົດງາມແລະເຕັມດ້ວຍຊີວິດຊີວາໂດຍການໃຊ້ເວລາໃນແຕ່ລະມື້ຫລົກຫຍ້າ ແລະລິກິ່ງງ່າທີ່ຫ່ຽວແຫ້ງອອກຈາກຕົ້ນດອກໄມ້ຂອງລາວ. ໂປໂລບັນທຶກສິ່ງທີ່ບໍ່ດີຫລາຍຢ່າງໄວ້ທີ່ພວກເຮົາຕ້ອງກຳຈັດອອກໃຫ້ໄກເພື່ອຮັກສາຊີວິດແລະຄວາມສັມພັນຂອງພວກເຮົາໃຫ້ມີຊີວິດຊີວາຢ່າງເຕັມລົ້ນ. ນິສັຍຂອງ**ຄວາມຂົມຂື່ນ**ສ້າງການກະທຳທີ່ເຈັບປວດ. ເວລາ**ຄົນໃຈຮ້າຍ**ລະເບີດອອກມາແລະຄວາມຮູ້ສຶກ**ຮ້າຍກາດ**ແຕ່ກໍາເນີດປະຄວາມສັມພັນໃຫ້ເຫລືອໃນຂີ້ເທົ່າ. ຄຳເວົ້າກາຍເປັນອາວຸດເມື່ອທ່ານຫາກຖືກເຈັບຊ້ຳ**ການຂູ່ເຂັນ**ຫລືທຳລາຍຊື່ສຽງຂອງຄົນອື່ນໂດຍຜ່ານ**ການເວົ້າສຽດສີ**. ຢ່າຢຸດເຊົາໃນການຊຳຣະ**ຄວາມຊົ່ວຮ້າຍ**ທຸກຢ່າງອອກຈາກຊີວິດຂອງທ່ານ.

**3. <u>ຫາທາງໃຫ້ອະພັຍ</u>** (ເອເຟໂຊ 4:32)

ທ່ານປົວແປງຄວາມສັມພັນທີ່ຫັກພັງລົງຢ່າງໃດ? ໂປໂລເອີ້ນວ່ານິສັຍທີ່ຊຸກຍູ້ການໃຫ້ອະພັຍ. ຄຣິສຕຽນເປັນຄົນທີ່**ມີໃຈກະຣຸນາ**ຕໍ່ຄົນອື່ນໆ. ຄວາມມີໃຈກະຣຸນາແມ່ນພອນສວັນຂອງຄວາມຮັກຕໍ່ພວກທີ່ບໍ່ມີຄວາມຮັກຕອບສນອງຄືນ. ຄວາມມີໃຈກະຣຸນານຳການປົວແປງມາໃຫ້ໂດຍການທຳລາຍໂຄຈອນຂອງການແກ້ແຄ້ນ. ຄຣິສຕຽນຍັງຖືກເອີ້ນວ່າເປັນຄົນທີ່**ມີຄວາມສົງສານ**ອີກດ້ວຍ. ຄວາມສົງສານຊອກຫາວິທີເຂົ້າໃຈຄົນອື່ນໆ, ແມ້ກະທັ້ງພວກທີ່ເຮັດໃຫ້ພວກເຮົາເຈັບຊ້ຳ, ໂດຍການສອບຖາມໃນຄວາມຮັກ, "ມັນຈະເປັນຄືແນວໃດຫນໍໃນການເປັນຄືຕົວເຈົ້າ?" ຄວາມສົງສານ, ແລະຄວາມເຂົ້າໃຈມັນນຳການເປີດໃຈຂອງພວກເຮົາໃຫ້ຮັບແລະເອົາໃຫ້ຂອງຂວັນແຫ່ງການໃຫ້ອະພັຍ.

ເມື່ອທ່ານຫາກມີບັນຫາບໍ່ສາມາດຊອກເຫດຜົນໃນການໃຫ້ອະພັຍ, ໃຫ້ຈົດຈຳແນວນີ້: **ໃນພຣະຄຣິດພຣະເຈົ້າກໍຍັງຍົກໂທດໃຫ້ທ່ານເຫມືອນກັນ**. ເອົາສິ່ງທີ່ພຣະຄຣິດໄດ້ກະທຳສຳລັບທ່ານ, ແມ່ນຫຍັງເຮັດໃຫ້ທ່ານລຳບາກໃນການເຮັດຕໍ່**ຊຶ່ງກັນແລະກັນ**?

**4. <u>ການກໍ່ສ້າງຂຶ້ນໃຫມ່ຫລືແກ້ແຄ້ນ? ສຶກສາຄະດີ</u>** (ຟີເລໂມນ 8-10, 15-18)

ໂອເນຊີໂມໄດ້ລັກຫນີຈາກການເປັນຂ້ອຍຂ້າແລະຈາກນາຍຂອງລາວ, ຟີເລໂມນ. ໃນການຊອກຫາໃຫ້ຕົນເປັນອິສຣະພາບ, ລາວໄດ້ພົບສິ່ງທີ່ຍິ່ງໃຫຍ່ກວ່າເສຣີພາບເມື່ອລາວໄດ້ພົບກັບໂປໂລແລະກໍໄດ້ຮັບຄວາມລອດພົ້ນບາບໂດຍຜ່ານພຣະເຢຊູຄຣິດ. ໂອເນຊີໂມໄດ້ກາຍເປັນຜູ້ຊ່ອຍໂປໂລ. ໃນຄວາມຕ້ອງການທີ່ຈະຖວາຍກຽດໃຫ້ແກ່ພຣະຄຣິດໃນຄວາມສັມພັນຂອງລາວ, ໂອເນຊີໂມຮູ້ວ່າຄວາມສັມພັນຂອງລາວຕໍ່ຟີເລໂມນໄດ້ຂາດລົງແລະຕ້ອງໄດ້ກໍ່ສ້າງຂຶ້ນໃຫມ່ອີກ. ສິ່ງທີ່ໂປໂລໄດ້ຂຽນຫາຟີເລໂມນຕາງຫນ້າໃຫ້ໂອເນຊີໂມ ໄດ້ສອນຫຍັງໃຫ້ທ່ານກ່ຽວກັບຄວາມສຳຄັນຂອງການສ້າງຕັ້ງຄວາມສັມພັນຂຶ້ນໃຫມ່?

ການອະພັຍຕ້ອງເປັນການອາສາສມັກ. ໂປໂລມີສິດທຸກຢ່າງ, ເທິງພື້ນຖານຂອງຄວາມເຊື່ອທີ່ຟີເລໂມນມີຢູ່ນັ້ນ, **ຄຳສັ່ງ**ໃຫ້ລາວສ້າງຄວາມສັມພັນຂຶ້ນໃຫມ່ກັບໂອເນຊີໂມ, ບໍ່ແມ່ນໃນຖານະເປັນນາຍ, ແຕ່ໃນຖານະເປັນ**ອ້າຍນ້ອງ**ກັນໃນພຣະຄຣິດ. ແຕ່ວ່າໂປໂລໄດ້ເລືອກທາງທີ່ຈະ**ແຈ້ງ**ຕໍ່ຟີເລໂມນ**ເທິງພື້ນຖານຂອງຄວາມຮັກ**. ຖ້າຫາກວ່າຄວາມສັມພັນຕ້ອງມີການປົວແປງ ໂປໂລກໍຮູ້ແລ້ວວ່າຟີເລໂມນກໍຈະເລືອກເອົາການໃຫ້ອະພັຍແກ່ໂອເນຊີໂມສຳລັບ

ການລັກໂຕນໜີແລະໂອເນຊີໂມກໍຈະເລືອກເອົາການຍົກໂທດໃຫ້ແກ່ຟີເລໂມນສຳລັບການກົດຂີ່ທີ່ລາວໄດ້ຮັບຕອນເປັນຂ້ອຍຂ້ານັ້ນ. ບໍ່ມີຜູ້ໃດສາມາດບັງຄັບໃຫ້ຜູ້ອື່ນອະພັຍໂທດໃຫ້ແກ່ຄົນເອງໄດ້. ພຣະຄຣິດໄດ້ບັນຊາໃຫ້ພວກເຮົາຄືນດີກັນໃຫມ່ແລະຄຣິສຕະຈັກຕ້ອງໜູນນ້ຳໃຈພວກທີ່ມີຄວາມສັມພັນທີ່ຫັກພັງໃຫ້ກໍ່ສ້າງຂຶ້ນໃຫມ່ອີກ, ແຕ່ລະຄົນຕ້ອງເລືອກເອົາການໃຫ້ອະພັຍ.

ພຣະເຈົ້າສາມາດໄຖ່ພວກເຮົາອອກຈາກຄວາມສັມພັນທີ່ມີບາດແຜ. ຄວາມປາຖນາຂອງໂປໂລສຳລັບການກໍ່ສ້າງຄວາມສຳພັນລະຫວ່າງຟີເລໂມນກັບໂອເນຊີໂມແລະຄວາມເຕັມໃຈຂອງໂປໂລທີ່ຈະຈ່າຍຄ່າໜີ້ທີ່ໂອເນຊີໂມໄດ້ມີຕໍ່ຟີເລໂມນໄດ້ສະທ້ອນໃຫ້ເຫັນການກະທຳອັນຍິ່ງໃຫຍ່ຂອງພຣະຄຣິດໃນການທີ່ເຮັດໃຫ້ຄົນບາບຄືນດີກັນກັບພຣະເຈົ້າໂດຍການໄຖ່ຂອງພຣະອົງຄືການຕາຍທີ່ໄມ້ກາງແຂນ(2 ໂກຣິນໂທ 5:18-19, 21). ຖ້າວ່າຟີເລໂມນຫາກເປີດໃຈຕໍ່ເປົ້າໝາຍຂອງພຣະເຈົ້າ, ລາວກໍຈະຮັບເອົາໂອເນຊີໂມຄືນ**ຢ່າງຖາວອນ**, ບໍ່ແມ່ນໃນຖານະຂ້ອຍຂ້າ, ແຕ່ໃນຖານະເປັນ**ອ້າຍນ້ອງທີ່ຮັກແພງ**ຜູ້ນຶ່ງອີກ.

ບາດແຜໃນຄວາມສັມພັນເຮັດໃຫ້ຄົນເຈັບຊ້ຳຢ່າງສາຫັດ. ຄວາມບາບທີ່ກໍ່ໃຫ້ເກີດບາດແຜແລະຄວາມຍິ່ງຍະໂສທີ່ສຽບແທງພວກເຂົາເຮັດໃຫ້ບໍ່ເປັນທີ່ຊອບພຣະທັຍແກ່ພຣະເຈົ້າດ້ວຍ. ແຕ່ພຣະເຈົ້າຂອງພວກເຮົາຍິ່ງໃຫຍ່ພໍທີ່ສາມາດໄຖ່ເອົາຄວາມເຈັບຊ້ຳຂອງພວກເຮົາແລະນຳເອົາສິ່ງທີ່ດີອອກມາຈາກຄວາມສັມພັນທີ່ຫັກພັງນັ້ນ. ພຣະອົງເປັນພຣະ ເຈົ້າທີ່ປະເສີດໃນການເລີ່ມຕົ້ນໃຫມ່. ພຣະຄຸນອັນດຽວກັນນັ້ນທີ່ຕິດຕັ້ງສາຍສຳພັນຂອງພວກເຮົາເຂົ້າກັບພຣະອົງຄືນສາມາດກໍ່ສ້າງຄວາມສັມພັນຂອງພວກເຮົາໃຫ້ກັບຄືນຊື່ງກັນແລະກັນໄດ້.

## ບົດຮຽນຊີວິດ

ໂດຍການກ່ຽວພັນກັບຄົນອື່ນໆໃນທາງທີ່ຄ້າຍຄືກັບພຣະຄຣິດ, ລວມທັງການຊອກຫາທາງຄືນດີກັນກັບພວກທີ່ບໍ່ຖືກຕ້ອງກັບເຮົາ, ພວກເຮົາສ້າງຄວາມສັມພັນທີ່ພຣະເຈົ້າມີພຣະປະສົງເອົາໄວ້ນັ້ນ. ທ່ານສາມາດວາດພາບວ່າຊີວິດຂອງທ່ານຈະເປັນຢ່າງໃດຖ້າທ່ານຫາກເຮັດຕາມຕົວຢ່າງການໃຫ້ອະພັຍຂອງພຣະເຈົ້າ? ພຣະທັມທີ່ທ່ານໄດ້ສຶກສາ ມື້ນີ້ເຮັດໃຫ້ທ່ານມີເຫດຜົນທີ່ດີວ່າເປັນຫຍັງໂດຍພຣະຄຸນຂອງພຣະເຈົ້າ, ທ່ານສາມາດຄືນດີກັນກັບພວກທີ່ເຮັດຜິດຕໍ່ທ່ານແລະທີ່ທ່ານໄດ້ເຮັດຜິດຕໍ່ພວກເຂົາ.

- ຖ້າຫາກທ່ານເປັນຂອງພຣະເຢຊູ, ພຣະອົງໄດ້ສ້າງທ່ານໃຫ້ເປັນຄົນໃຫມ່ແລ້ວທີ່ມີຄວາມປາຖນາ ຢາກຊອກຫາທາງຄືນດີກັນແລະກຳລັງຝ່າຍວິນຍານທີ່ສາມາດໃຫ້ເຮັດຢ່າງນັ້ນໄດ້.
- ຄວາມເຊື່ອແບບຄຣິສຕຽນຂອງທ່ານຈະນຳພາທ່ານໃນການດຳຣົງຊີວິດທີ່ສາມາດຫລີກເວັ້ນນິສັຍທີ່ນຳໄປສູ່ຄວາມພິນາດຫລາຍຢ່າງແລະການກະທຳຕ່າງໆກ່ອນສິ່ງເຫລົ່ານັ້ນຈະເກີດຂຶ້ນ.
- ທ່ານມີຕົວຢ່າງການໃຫ້ອະພັຍທີ່ດີທີ່ສຸດໃນການຕິດຕາມ, ພຣະບິດາຜູ້ສະຖິດໃນສວັນທີ່ເຕັມໄປດ້ວຍຄວາມຮັກແລະປະທານພຣະບຸດຂອງພຣະອົງເພື່ອທ່ານຈະໄດ້ຮັບການໃຫ້ອະພັຍ.
- ທ່ານສາມາດເບິ່ງເຫັນໄດ້ວ່າການອະພັຍໂທດແມ່ນການເລືອກທີ່ພຣະເຈົ້າປະສົງຢາກໃຫ້ທ່ານເຮັດ. ທ່ານສາມາດເລືອກເອົາທາງນັ້ນຢ່າງໝັ້ນໃຈວ່າພຣະເຈົ້າຈະນຳສິ່ງດີງອອກຈາກພາວະທີ່ຫຍຸ້ງຍາກນັ້ນໄດ້.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by PA